## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 14 ພຶສພາ 2023 (05-14-2023)

---

### ການຟື້ນຕົວຈາກການຕົກເຂົ້າສູ່ການທົດລອງ

*ເມື່ອໃດທີ່ຕາທັງຄູ່ໄດ້ປ່ຽນທັສນະຂອງທ່ານໄປແທ້ໆ?*

**ຈຸດສຳຄັນໃນບົດຮຽນ:** ກັບຄືນຫາພຣະເຈົ້າເພື່ອຮັບການອະພັຍແລະການຟື້ນຕົວຄືນໃໝ່.

**ພຣະຄັມພີຕອບສນອງຕໍ່ຊີວິດ.**

ຜູ້ໃດຜູ້ນຶ່ງເຄີຍຊື້ເຮືອນ ມັກມີຄວາມແຕກຕ່າງຢ່າງໃຫ່ຽຫຼວງໃນສິ່ງທີ່ຜູ້ຊື້ແລະຜູ້ຂາຍເຫັນ ກັບສິ່ງທີ່ ອິນສະເປັກເຕີເຫັນ. ພວກເຮົາອາດເຫັນສິ່ງທີ່ປາກົດໃຫ້ເຫັນກັບຕາເຮົາ-ຄືຮູບຮ່າງຂອງເຮືອນ, ຂນາດຫ້ອງນອນ, ແລະອື່ນໆ-ຫຼືຮອຍແຕກທີ່ເພດານ ຫຼືພົບວ່າປະຕູອັດບໍ່ແຈບ, ແຕ່ ອິນສະເປັກເຕີບໍ່ໄດ້ຢຸດທໍ່ນັ້ນ. ລາວຈະກວດກາເບິ່ງຕໍ່ວ່າເຫດໃດເພດານຈຶ່ງແຕກ. ລາວຈະຄານເຂົ້າເບິ່ງກ້ອງຕລ່າງ ຕາທີ່ໄດ້ຮັບການອົບຮົມຂອງລາວແນມເຫັນສິ່ງທີ່ເຮົາບໍ່ສາມາດແນມເຫັນດ້ວຍສາຍຕາທີ່ຈຳກັດຂອງເຮົາ. ພວກເຮົາສາມາດມີມຸມມອງທີ່ຈຳກັດກ່ຽວກັບທັສນະຂອງພຣະເຈົ້າເໝືອນກັນ. ຕົວຢ່າງ, ວິທີຈັດການກັບຄວາມບາບຂອງທ່ານບອກຫຼາຍຢ່າງກ່ຽວກັບສິ່ງທີ່ທ່ານເຊື່ອໃນພຣະເຈົ້າ. ຖ້າທ່ານຄິດວ່າພຣະເຈົ້າຈະອະພັຍບາບໃຫ້ທ່ານຍ້ອນວ່າບໍ່ແມ່ນເຣື່ອງໃຫ່ຽ, ມູມມອງຂອງທ່ານກ່ຽວກັບພຣະເຈົ້າແມ່ນນ້ອຍໂພດ. ຖ້າທ່ານຄິດວ່າພຣະເຈົ້າຈະບໍ່ອະພັຍບາບແກ່ທ່ານເພາະວ່າພຣະອົງເປັນພຣະເຈົ້າທີ່ຮຸນແຮງແລະຫຽ້ມໂຫດ, ມຸມມອງຂອງທ່ານກໍຍັງນ້ອຍຢູ່. ໃຫ້ເຮົາມາຄົ້ນຄວ້າເບິ່ງມູມມອງຂອງພຣະເຈົ້າ, ຄືສິ່ງທີ່ຈະຂັບເຄື່ອນເຮົາໃຫ້ແລ່ນເຂົ້າຫາພຣະເຈົ້າເວລາເຮົາເຮັດບາບ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>ເພງສັຣເສີນ 32:1-2.</u>**

*[1]ຄວາມສຸກເປັນຂອງຜູ້ທີ່ໄດ້ຮັບການໃຫ້ອະໄພ ແລະຜູ້ທີ່ໄດ້ຮັບການຍົກໂທດ. [2]ຄວາມສຸກເປັນຂອງຜູ້ທີ່ພຣະຜູ້ເປັນເຈົ້າບໍ່ໄດ້ຕໍ່ວ່າການກະທຳຜິດຂອງເຂົາ ແລະຜູ້ບໍ່ມີກົນອຸບາຍຫລອກລວງຄົນອື່ນ.*

ຂໍ້ຄວາມຂອງເພງສັຣເສີນບົດ 32 ແມ່ນ ມີຄວາມຍິນດີກວ່າ ໃນການບໍ່ເປີດເຜີຍຄວາມບາບຂອງເຮົາ ແລະ ການພົບການໃຫ້ອະພັຍຫຼາຍກວ່າການພະຍາຍາມປົກປິດຄວາມບາບຂອງເຮົາ. ແລະ ໃນທັສນະອັນຊອບທັມຂອງພຣະເຈົ້າ ອະນຸຍາດໃຫ້ເຮົາເຮັດແຕ່ເທົ່ານັ້ນ. ແຕ່ ເພື່ອຈະໃຫ້ເຂົ້າໃຈປະສົບການຄວາມຍິນດີ ແລະພຣະພອນການໃຫ້ອະພັຍຂອງພຣະເຈົ້າ, ພວກເຮົາບໍ່ພຽງແຕ່ໃຫ້ເຂົ້າໃຈວ່າພຣະເຈົ້າແມ່ນໃຜເທົ່ານັ້ນ, ພວກເຮົາຍັງຕ້ອງເຂົ້າໃຈສະພາບຂອງຄວາມບາບເປັນຢ່າງໃດອີກດ້ວຍ. ທ່ານດາວິດໄດ້ໃຊ້ສາມຄຳເພື່ອຊ່ວຍເຮົາໃນເຣື່ອງນີ້.

1. **ການລ່ວງລະເມີດ.** ນີ້ແມ່ນການກະທຳຂອງການກະບົດຕໍ່ພຣະເຈົ້າ. ມັນແມ່ນການກ້າວກ່າຍເສັ້ນແດນຂອງພຣະເຈົ້າ.
2. **ຄວາມບາບ.** ນີ້ແມ່ນຄຳສັບໝາຍເຖິງການຜິດເປົ້າໝາຍ. ບໍ່ວ່າຈະເປັນການຕັ້ງໃຈຫຼືບໍ່ຕັ້ງໃຈກໍຕາມ, ພວກເຮົາຢື້ບໍ່ເຖິງແລະນັ້ນຄືຄວາມບາບ.

3. **ຄວາມຊົ່ວຊ້າ.** ຄວາມຊົ່ວຊ້າເລັງເຖິງຄວາມບິດເບືອນ, ການກະທຳຜິດ, ໃຈຄົດລ້ຽວຕໍ່ນ້ຳພຣະທັຍພຣະເຈົ້າ.

ຈົ່ງສັງເກດເບິ່ງດາວິດອະທິບາຍແຫຼ່ງຄວາມຍິນດີຂອງເພິ່ນ. ການລ່ວງລະເມີດໄດ້ຮັບການອະພັຍ; ຄວາມຜິດໄດ້ຖືກລົບລ້າງແລະຮັບໄປ. ຄວາມບາບໄດ້ຮັບການຮັບຮອງ; ໄດ້ຖືກສົດໃຊ້, ແລະໄດ້ຖືກຊຳຣະແລ້ວ. ຄວາມບົກຜ່ອງບໍ່ໄດ້ຖືກຕໍ່ວ່າ; ແທນທີ່ຈະເປັນດັ່ງນັ້ນ, ລາວຖືກນັບວ່າເປັນຄົນຊອບທັມຕໍ່ພຣະພັກພຣະເຈົ້າຜູ້ບໍຣິສຸດ.

ຄວາມຍິນດີແລະພຣະພອນໃນການອະພັຍໄດ້ຖືກຮັບປະກັນຕໍ່ທຸກຄົນທີ່ມາຫາພຣະເຈົ້າດ້ວຍການຖ່ອມຕົວ, ຊຶ່ງບໍ່ໄດ້ເຊື່ອງຄວາມບາບຂອງເຂົາໄວ້. ດາວິດໄດ້ອະທິບາຍຄົນເຊັ່ນນັ້ນເໝືອນດັ່ງຄົນ "ຜູ້ທີ່ບໍ່ມີກົນອຸບາຍຫຼອກລວງ!" ຄົນນີ້ມາຢ່າງ"ສະອາດ" ແລະສາຣະພາບບາບຂອງລາວ.

*ມີຂ່າວປະເສີດຫຍັງທີ່ທ່ານພົບເຫັນໃນຂໍ້ພຣະຄັມພີເຫຼົ່ານີ້?*

ຄວາມຕົວະໃຫຍ່ອັນນຶ່ງຂອງຊາຕານແມ່ນພຣະເຈົ້າຈະບໍ່ໃຫ້ອະພັຍເຮົາ. ຊາຕານຢາກໃຫ້ເຮົາເຊື່ອວ່າພຣະເຈົ້າເປັນຜູ້ພິພາກສາທີ່ໂຫດຮ້າຍ. ຖ້າພວກເຮົາເຊື່ອຄຳຕົວະເຫຼົ່ານັ້ນ, ພວກເຮົາກໍຈະແລ່ນໜີຈາກພຣະເຈົ້າເມື່ອເຮົາເຮັດບາບ. ພວກເຮົາຈະພະຍາຍາປົກປິດຄວາມບາບຂອງເຮົາໄວ້. ບໍ່ມີສິ່ງໃດ "ພົ້ນ" ກ່ຽວກັບການເຊື່ອງຄວາມບາບ; ພວກເຮົາບໍ່ສາມາດຫຼົບໜີຄວາມເດືອດຮ້ອນຈາກຄວາມຜິດຂອງເຮົາ. ແຕ່ເວລາເຮົາມອບຄວາມບາບຂອງເຮົາແລະຫັນຫຼັງໃຫ້ມັນ, ຄວາມຍິນດີກໍຈະຕາມມາ. ພວກເຮົາຈະປະສົບຄວາມຍິນດີຢ່າງມະຫາສານ ເມື່ອຄວາມບາບຂອງເຮົາໄດ້ຮັບການອະພັຍ, ໄດ້ຮັບການຍົກໂທດຈາກພຣະເຈົ້າ, ແລະບໍ່ຖືກຕໍ່ວ່າ.

ພຣະເຈົ້າສາມາດອະພັຍໃຫ້ພວກເຮົາໃນທາງນີ້ເພາະວ່າພຣະອົງໄດ້ກຳຈັດບາບຂອງພວກເຮົາໃນພຣະບຸດຂອງພຣະອົງແລ້ວ. ພຣະເຢຊູເປັນຜູ້ບໍ່ມີບາບ; ພຣະອົງບໍ່ເຄີຍເຮັດບາບຈັກເທື່ອ. *ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ" (2 ກຣທ 5:21).* ການລ່ວງລະເມີດຂອງເຮົາໄດ້ຖືກຍົກອອກໄປເພາະວ່າບາບເຫຼົ່ານັ້ນຖືກຕຶງທີ່ໄມ້ກາງເຂນພຣະເຢຊູແລ້ວ; ຄວາມບາບຂອງເຮົາຖືກປົກຄຸມດ້ວຍພຣະໂຮຫິດ, ແລະຄວາມບົກຜ່ອງຂອງເຮົາບໍ່ໄດ້ປັບໂທດເຮົາເພາະວ່າມັນຖືກປັບໂທດໃສ່ພຣະເຢຊູແລ້ວ.

ເມື່ອເຮົາເຂົ້າໃຈວ່າພຣະເຈົ້າແມ່ນໃຜແລະສິ່ງທີ່ພຣະອົງໄດ້ກະທຳເພື່ອເຮົາໃນພຣະເຢຊູແລ້ວ, ພວກເຮົາສາມາດແລ່ນເຂົ້າຫາພຣະອົງເວລາເຮົາເຮັດບາບແລະສາຣະພາບບາບຂອງເຮົາ. ຄວາມຍິນດີ ແລະພຣະພອນແຫ່ງການໃຫ້ອະພັຍ ເກີນກວ່າຄວາມຮູ້ສຶກຜິດຫຼືຄວາມອັບອາຍທີ່ເຮົາອາດມີຕໍ່ບາບຂອງເຮົາ. ຄວາມຍິນດີແລະພຣະພອນແຫ່ງການໃຫ້ອະພັຍຈະປົກບັງຊື່ສຽງຫຼືອຳນາດທີ່ພວກເຮົາຄິດວ່າພວກເຮົາຈະຮັກສາໄວ້ ແທນທີ່ພວກເຮົາຈະປົກປິດຄວາມບາບຂອງເຮົາ. ຄວາມຍິນດີ ແລະພຣະພອນແຫ່ງການໃຫ້ອະພັຍດີລື່ນຄວາມສຸກຊົ່ວຄາວໃດນຶ່ງທີ່ຄວາມບາບຈັດຫາໃຫ້.

## 2. <u>ເພງສັຣເສີນ 32:3-5</u>.

*[3]ເມື່ອຂ້ານ້ອຍບໍ່ສາລະພາບຄວາມຜິດ ຂ້ານ້ອຍກໍໄດ້ຮັບທຸກຈົນຮ້ອງໄຫ້ຕະຫລອດມື້. [4]ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ຊົງລົງໂທດຂ້ານ້ອຍທັງກາງເວັນແລະກາງຄືນ ກຳລັງຂອງຂ້ານ້ອຍອ່ອນແຮງລົງເໝືອນດັ່ງຄວາມປຽກຊຸ່ມທີ່ແຫ້ງລົງໃນລະດູຮ້ອນ. [5]ແຕ່ເມື່ອຂ້ານ້ອຍຍອມຮັບຜິດຕໍ່ພຣະອົງໂດຍບໍ່ໄດ້ປົກປິດຫຍັງໄວ້ ຂ້ານ້ອຍສາລະພາບທຸກຢ່າງ ແລ້ວພຣະອົງກໍຊົງອະໄພໃນການລ່ວງລະເມີດຂອງຂ້ານ້ອຍ.*

ທ່ານດາວິດໄດ້ຂຽນເພງສັຣເສີນບົດນີ້ຫຼັງຈາກສາຣະພາບບາບທີ່ດັງທີ່ສຸດ. ໃນ 2 ຊາມູເອນ 11, ດາວິດໄດ້ລ່ວງລ້ຳເບັດເຊບາ ແລະໄດ້ຫຼິ້ນຊູ້ກັບນາງ. ເພິ່ນພະຍາຍາມປົກປິດຄວາມບາບນີ້ ດ້ວຍການເອີ້ນອູຣີອາມາເຮືອນຈາກສນາມຣົບ ຫວັງວ່າລາວຈະໃຊ້ເວລາໃກ້ຊິດກັບພັລຍາ. ໃນເມື່ອແຜນນີ້ບໍ່ໄດ້ຜົນ, ດາວິດຈຶ່ງຊອກຫາທາງເຮັດໃຫ້ ອູຣີອາເມົາເພື່ອໃຫ້ລາວເມືອຫານາງ. ເມື່ອວິທີນັ້ນບໍ່ໄດ້ຜົນອີກ, ດາວິດຈຶ່ງໄດ້ຂ້າອູຣີອາເສັຍ.

ບາບບໍ່ໄດ້ຖືກສາຣະພາບຈົນກວ່າຜູ້ທຳນວາຍນາທານໄດ້ຕໍ່ວ່າເພິ່ນ, ດາວິດຈຶ່ງໄດ້ສາຣະພາບບາບຂອງເພິ່ນ. ຄຳອະທິບາຍຂອງດາວິດເຖິງຜົນຂອງບາບທີ່ບໍ່ໄດ້ສາຣະພາບເປັນພາບທີ່ມີຣິດອຳນາດຫຼາຍ. ການປົກປິດຄວາມບາບຂອງເຮົາເຮັດໃຫ້ເຮົາເປັນທຸກທາງກາຍ, ທາງຈິດໃຈ, ແລະທາງອາຣົມ. ພວກເຮົາມີແນວໂນ້ມທີ່ຈະຄິດວ່າບາບເປັນບັນຫາຝ່າຍວິນຍານ, ແຕ່ບາບໄດ້ສົ່ງຜົນກະທົບຕໍ່ດາວິດລົງເຖິງກະດູກຂອງເພິ່ນ. “*ເມື່ອຂ້ານ້ອຍບໍ່ສາລະພາບຄວາມຜິດ ຂ້ານ້ອຍກໍໄດ້ຮັບທຸກຈົນຮ້ອງໄຫ້ຕະຫລອດມື້...ກຳລັງຂອງຂ້ານ້ອຍອ່ອນແຮງລົງເໝືອນດັ່ງຄວາມປຽກຊຸ່ມທີ່ແຫ້ງລົງໃນລະດູຮ້ອນ (ຂໍ້ 3, 4ຂ).*

ບາບບໍ່ໄດ້ສາຣະພາບສາມາດເຮັດໃຫ້ເຮົາທຸກໃຈ. ຂ້າພຣະເຈົ້າບໍ່ໄດ້ໝາຍເຖິງຄວາມທຸກໃຈທາງການແພດທີ່ເປັນຜົນເນື່ອງມາຈາກບາບບໍ່ໄດ້ສາຣະພາບ; ມັນມີຄວາມຊຶມເສົ້າທີ່ສືບເນື່ອງມາຈາກພຍາດທາງຈິດ, ແລະຕ້ອງການ ການກວດກາທາງການແພດ. ແຕ່ດາວິດຊ່ອຍໃຫ້ເຮົາເຂົ້າໃຈວ່າ ບາບທີ່ບໍ່ໄດ້ສາຣະພາບສາມາດນຳເຮົາໄປສູ່ການຕົກຕ່ຳ ຫຼືຕົກເປັນຈຳເລີຍ. ຄວາມຮູ້ສຶກຂອງເພິ່ນຖືກຫຸ້ມລ້ອມດ້ວຍ “ການຮ້ອງຄາງຕລອດມື້.”

ສຳລັບຜູ້ເຊື່ອ, ຄວາມບາບບໍ່ໄດ້ທຳລາຍຄວາມສັມພັນຂອງເຮົາກັບພຣະເຈົ້າພຣະບິດາ, ແຕ່ ມັນເປັນອັນຕະລາຍຕໍ່ຄວາມສັມພັນຂອງເຮົາກັບພຣະອົງ. ເມື່ອເຮົາເຮັດບາບແລະບໍ່ສາຣະພາບ, ພວກເຮົາຈະເລີ່ມຮູ້ສຶກຫ່າງໄກໄປຈາກພຣະເຈົ້າ. ແຕ່ຍ້ອນເຮົາເປັນລູກຂອງພຣະອົງ, ພຣະອົງຈະບໍ່ປ່ອຍປະເຮົາ. ທາງນຶ່ງທີ່ພຣະອົງຕິດຕາມເຮົາຄື-*“ພຣະອົງຊົງລົງໂທດຂ້ານ້ອຍທັງກາງເວັນແລະກາງຄືນ”* (ຂໍ້ 4)-ແມ່ນດ້ວຍການລົງໂທດບາບພວກເຮົາ ແລະປະໃຫ້ເຮົາຈົມລົງໃນຄວາມບາບທີ່ບໍ່ໄດ້ສາຣະພາບນັ້ນ. ດາວິດເຂົ້າໃຈດີວ່າພຣະເຈົ້າໄດ້ກະທຳແບບນັ້ນເພາະວ່າແມ່ນພຣະຫັດພຣະເຈົ້າທີ່ລົງໂທດເພິ່ນຢ່າງໜັກ.

ມັນແມ່ນການກະທຳດ້ວຍຄວາມຮັກເມື່ອພຣະເຈົ້າລົງມືໜັກໃສ່ເຮົາເພາະຄວາມບາບຂອງເຮົາ. ຂ່າວດີຄືວ່າເຮົາສາຣະພາບແລະກັບໃຈກໍຈະໄດ້ຮັບການອະພັຍ. ໃນ ຂໍ້ 5, ດາວິດໄດ້ໃຊ້ສາມຄຳເດີມທີ່ໄດ້ໃຊ້ກ່ອນໜ້ານີ້-ການລ່ວງລະເມີດ, ບາບ, ຄວາມຊົ່ວຊ້າແຕ່ໃນລຳດັບປີ້ນກັນ. ດາວິດບໍ່ໄດ້ຍຶດສິ່ງໃດໄວ້ໃນສິ່ງທີ່ເພິ່ນສາຣະພາບ! ບໍ່ມີຄວາມບາບໃດທີ່ພຣະເຈົ້າຈະບໍ່ໃຫ້ອະພັຍ ເມື່ອເຮົາສາຣະພາບມັນ. ບໍ່ມີຄວາມຜິດໃດໆທີ່ພຣະອົງຈະບໍ່ລຶບລ້າງໃຫ້ເມື່ອພວກເຮົາເປີດເຜີຍມັນ. ເ

*ເປັນຫຍັງການສາຣະພາບຈຶ່ງເປັນບາດກ້າວທີ່ສຳຄັນໃນການເດີນທາງຂອງເຮົາຄືນຫາພຣະເຈົ້າ?*

## 3. ເພງສັຣເສີນ 32:6-7.

*6ດັ່ງນັ້ນ ຜູ້ທີ່ຈົງຮັກພັກດີຕໍ່ພຣະອົງ ຕ້ອງອ້ອນວອນຮ້ອງຫາພຣະອົງໃນຍາມລຳບາກ ເມື່ອນໍ້າຫຼາຍຂຶ້ນມັນຈະບໍ່ຖ້ວມໄປເຖິງພວກເຂົາ.*
*7ພຣະອົງຊົງເປັນບ່ອນຫຼົບລີ້ຂອງຂ້ານ້ອຍ ພຣະອົງຈະຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກຄວາມທຸກຍາກລຳບາກ ຂ້ານ້ອຍ ຮ້ອງເພງດ້ວຍສຽງດັງໃນການທີ່ພຣະອົງໄດ້ຊົງຊ່ອຍໃຫ້ພົ້ນໄພ ເພາະວ່າພຣະອົງຊົງຄຸ້ມຄອງຂ້ານ້ອຍໄວ້.*

ຄວາມປະທັບໃຈອັນຍິ່ງໃຫຍ່ຂອງເພງສັຣເສີນບົດ 32 ແມ່ນ ເມື່ອເຮົາເຮັດບາບ, ພວກເຮົາພະຍາຍາມປົກປິດມັນໄວ້. ແຕ່ພຣະເຈົ້າເຊື້ອເຊີນເຮົາໃຫ້ກັບຄືນຫາພຣະອົງແລະເປີດເຜີຍຄວາມບາບຂອງເຮົາອອກ. ເມື່ອເຮົາເຮັດແນວນີ້, ພຣະອົງຈະປົກບັງຄວາມບາບຂອງເຮົາໃນພຣະໂລຫິດພຣະບຸດຂອງພຣະອົງ. ຂ່າວປະເສີດພຣະກິດຕິຄຸນຈັ່ງແມ່ນສງ່າງາມ! ພຣະເຈົ້າປະສົງຢາກທຳສິ່ງຈຳເປັນທີ່ເຮົາຢາກໃຫ້ແລ້ວ; ຍົກບາບຂອງເຮົາ. ເມື່ອພວກເຮົາຫັນຈາກຄວາມບາບຂອງເຮົາຫາພຣະຄຣິດ, ພຣະອົງກໍຈະອະພັຍໃຫ້ເຮົາແລະຄວາມສັມພັນຂອງເຮົາກັບພຣະອົງກໍຈະຖືກສ້າງຂຶ້ນໃໝ່.

ເພາະວ່າມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດອະພັຍຄວາມຜິດບາບຂອງເຮົາໄດ້, ພຣະອົງຜູ້ດຽວທີ່ເຮົາມາດແລ່ນຫາເພື່ອການໃຫ້ອະພັຍ. “ດັ່ງນັ້ນ ໃຫ້ທຸກຄົນທີ່ສັດຊື່ອະທິຖານຫາທ່ານທັນທີ.” ມີຂ່າວດີໃນຢູ່ໃນຄຳຖແລງນັ້ນ, ເພາະວ່າມັນໃຊ້ກັບທຸກຄົນ. ມັນເປັນຂໍ້ສເນີໃຫ້ໃຜກໍຕາມທີ່ສຳນຶກໃນຄວາມບາບຂອງເຂົາແລະເຂົ້າມາຫາພຣະເຈົ້າ.

ພຣະເຈົ້າໃຫ້ອະພັຍບາບທຸກຄົນທີ່ສັດຊື່. ໃນຖ້ອຍຄຳສະເພາະ, ນີ້ຊີ້ໄປຫາຜູ້ທີ່ສັດຊື່ຕໍ່ພັນທະສັນຍາທີ່ພຣະເຈົ້າໄດ້ກະທຳກັບຊາວ

ອິສຣາເອນເທິງພູຊີນາຍ (ອພຍ19-24). ແມ້ກະທັ້ງເວລາຊາວອິສຣາເອນເຮັດບາບຕໍ່ສູ້ພຣະເຈົ້າຢ່າງໄວວາຫຼັງຈາກໄດ້ຮັບພຣະສັນຍາ (ອພຍ 32). ພຣະເຈົ້າບໍ່ໄດ້ປ່ອຍປະເຂົາ. ແທນທີ່ຈະປ່ອຍປະເຂົາ, ພຣະອົງໄດ້ຕໍ່ພັນທະສັນຍາໃໝ່. ຜູ້ທີ່ເຊື່ອໃນພຣະເຈົ້າ ແລະສັດຊື່ຕໍ່ພັນທະສັນຍາຈະໄດ້ຮັບການອະພັຍເລື້ອຍໆເທົ່າທີ່ລາວມາຫາພຣະອົງ ແລະສາຣະພາບຄວາມບາບຂອງເຂົາ.

ໄດ້ຍິນຄຳຊຸກຍູ້ໃນວັກນີ້ບໍ່. ພວກເຮົາຕ້ອງສແວງຫາພຣະເຈົ້າແລະອະທິຖານທັນທີ. ເມື່ອເຮົາເຮັດຜິດ, ພວກເຮົາຈະຖືກລໍ້ໃຫ້ແລ່ນໜີແລະລີ້ຈາກພຣະເຈົ້າ. ດາວິດຮູ້ຈາກປະສົບການສ່ວນຕົວວ່າສິ່ງທີ່ດີທີ່ສຸດຄວນເຮັດແມ່ນ ແລ່ນຫາພຣະເຈົ້າທັນທີ ແລະວາງຄວາມບາບລົງຕໍ່ໜ້າພຣະອົງ.

ມັນເປັນການງ່າຍກວ່າຫຼາຍທີ່ຈະເຮັດສິ່ງນັ້ນ ເມື່ອເຮົາຮູ້ຈັກແລະເຂົ້າໃຈວ່າພຣະເຈົ້າເປັນໃຜ. ດາວິດຊີ້ແຈງວ່າພຣະເຈົ້າເປັນທີ່ລີ້ພັຍຂອງເຮົາ, ເປັນປ້ອມໃຫ້ພວກເຮົາແລ່ນຫາໃນເວລາມີບັນຫາ. ດາວິດຮຽກວ່າ "ບ່ອນຫຼົບລີ້ຂອງຂ້ານ້ອຍ."

*ທ່ານມີປະສົບການກັບພຣະເຈົ້າວ່າເປັນບ່ອນລີ້ພັຍຂອງທ່ານຢ່າງໃດ?*

ເມື່ອເຮົາເຫັນພຣະເຈົ້າໃນພຣະຄຸນ, ຄວາມເມດຕາ, ແລະຄວາມຮັກຂອງພຣະອົງ, ບໍ່ພຽງແຕ່ເຮົາຈະແລ່ນຫາພຣະອົງເວລາເຮົາເຮັດບາບ, ພວກເຮົາຈະຢາກຫຼີກເວັ້ນການເຮັດບາບຕໍ່ສູ້ພຣະອົງອີກດ້ວຍ. ຄວາມຮັກດຶງເຮົາເຂົ້ານະມັສການພຣະອົງ ແລະຍົກຍໍພຣະອົງ. ໃຫ້ເຮົາພາກັນສັຣເສີນພຣະເຈົ້າປະເສີດອົງນີ້ ຜູ້ຊຶ່ງຫວ່ານລ້ອມເຮົາດ້ວຍສຽງໂຫ່ຮ້ອງຍິນດີຂອງການປົດປ່ອຍເຮົາ!

*ກຸ່ມຂອງພວກເຮົາຈະຊ່ວຍກັນແລະກັນຟື້ນຕົວຈາກການທົດລອງເມື່ອເຮົາລົ້ມລົງຢ່າງໃດ?*

## ນຳໃຊ້ໃນຊີວິດ

ກັບຄືນຫາພຣະເຈົ້າເພື່ອຮັບການອະພັຍແລະການຟື້ນຕົວຄືນໃໝ່. ຈົ່ງເລືອກເອົານຶ່ງໃນການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງສາຣະພາບ.** ຖ້າທ່ານຍັງຮ້ອງໄຫ້ຢູ່ພາຍໃຕ້ຄວາມໜັກໜ່ວງຂອງຄວາມບາບ, ຈົ່ງໃຫ້ ເພງສັຣເສີນ 32:5 ເປັນຄຳອະທິຖານຂອງທ່ານ. ຈົ່ງສາຣະພາບຄວາມບາບຂອງທ່ານຕໍ່ພຣະເຈົ້າແລະອ້ອມກອດເອົາການໃຫ້ອະພັຍຂອງພຣະອົງ.
- **ຈົ່ງປິຕິຍິນດີ.** ຈົ່ງຂຽນບັນທຶກຫຼືຄຳອະທິຖານ, ຊື່ນຊົມຍິນດີໃນການໃຫ້ອະພັຍຂອງພຣະເຈົ້າ. ຈົ່ງພິຈາຣະນາຄຸນຄວາມດີແລະຄວາມເມດຕາຂອງພຣະເຈົ້າ ແລະສະແດງຄວາມຂອບຄຸນຂອງທ່ານຕໍ່ພຣະເຈົ້າ.
- **ຈົ່ງໂອ້ລົມ.** ຖ້າທ່ານຍັງສືບຕໍ່ເຈັບປວດເພາະຄວາມຜິດ, ຈົ່ງລົມກັບສິດຍາພິບານຂອງທ່ານ ຫຼືເພື່ອນຄຣິສຕຽນທີ່ທ່ານວາງໃຈໄດ້. ຊອກສແວງຫາການອູ້ມຊູແລະການຮັບປະກັນໃນການຄົ້ນຫາຄວາມຈິງແລະຄວາມຫງ່ງແທ້ນັ້ນ, ເມື່ອພຣະເຈົ້າເວົ້າວ່າພຣະອົງໃຫ້ອະພັຍ, ພຣະອົງໃຫ້ອະພັຍຈົນໝົດສິ້ນ.

ຄືກັນກັບສາຍຕາຂອງພວກເຮົາສາມາດຜິດພາດໃນເວລາມາເຖິງເຮືອນຫຼືໂຄງສ້າງອື່ນໆ, ດັ່ງນັ້ນ ການແນມເບິ່ງພຣະເຈົ້າຂອງເຮົາສາມາດເຫັນພໍມົວໆໄດ້. ແຕ່ ເມື່ອເຮົາມີສາຍຕາທີ່ແຈ່ມແຈ້ງແລ້ວໂດຍພຣະວິນຍານບໍຣິສຸດ, ພວກເຮົາຈະສາມາດແນມເຫັນເຮົາເອງດັ່ງທີ່ພຣະເຈົ້າເຫັນເຮົາ-ແລະ ຈົ່ງຕອບພຣະອົງຢ່າງເໝາະສົມ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**